ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ພັກປະຊາຊົນປະຕິວັດລາວ
ຄະນະໂຄສະນາອົບຮົມສູນກາງພັກ

ເລກທີ...12.../ຄອສນ
ນະຄອນຫຼວງວຽງຈັນ, ວັນທີ..13.../05/2023

# ແຈ້ງການ

**ເຖິງ:** - ຄະນະພັກບັນດາກະຊວງ - ອົງການ, ອົງການຈັດຕັ້ງມະຫາຊົນອ້ອມຂ້າງສູນກາງ.
- ຄະນະພັກນະຄອນຫຼວງວຽງຈັນ ແລະ ຄະນະພັກແຂວງໃນທົ່ວປະເທດ.
- ຄະນະໂຄສະນາອົບຮົມນະຄອນຫຼວງວຽງຈັນ ແລະ ບັນດາແຂວງໃນທົ່ວປະເທດ.

**ເລື່ອງ:** ການຈັດຕັ້ງໂຄສະນາ - ປາຖະກະຖາ ວັນຜ່າວົງປິດລ້ອມ ຂອງກອງພັນທີ 2 ວິລະຊົນທີ່ທົ່ງໄຫຫີນ ຊຽງຂວາງ ຄົບຮອບ 64 ປີ ແລະ ວິລະກຳ ໂຕນຄຸກຢ່າງມະຫັດສະຈັນ ຂອງບັນດາຜູ້ນຳຂອງພັກ ແລະ ແນວລາວຮັກສ້າງຊາດ ຄົບຮອບ 63 ປີ.

- ອີງຕາມ ພາລະບົດບາດ ໜ້າທີ່ຂອງຄະນະໂຄສະນາອົບຮົມສູນກາງພັກ.

ໃນໂອກາດຄົບຮອບ 64 ປີ ວັນຜ່າວົງປິດລ້ອມ ຂອງກອງພັນທີ 2 ວິລະຊົນທີ່ທົ່ງໄຫຫີນ ຊຽງຂວາງ (18/05/1959 - 18/05/2023 ) ແລະ ວິລະກຳໂຕນຄຸກຢ່າງມະຫັດສະຈັນ ຂອງບັນດາຜູ້ນຳຂອງພັກ ແລະ ແນວລາວຮັກສ້າງຊາດ ຄົບຮອບ 63 ປີ ( 24/ 05 /1960 – 24 / 05 /2023) ເພື່ອລະນຶກ ວັນປະຫວັດສາດສຳຄັນຂອງພັກ, ຂອງຊາດ ດັ່ງກ່າວ ຄະນະໂຄສະນາອົບຮົມສູນກາງພັກ ຈຶ່ງອອກແຈ້ງການແນະນຳ ເຊິ່ງມີເນື້ອໃນ ດັ່ງນີ້:

**I. ຈຸດປະສົງ - ຄາດໝາຍ.**

1. ເພື່ອທວນຄືນມູນເຊື້ອ ແລະ ລະນຶກເຖິງເຫດການສຳຄັນ ທາງດ້ານປະຫວັດສາດດັ່ງກ່າວ ທັງເປັນການໂຄສະນາ-ສຶກສາອົບຮົມ ໃຫ້ພະນັກງານ, ສະມາຊິກພັກ ແລະ ປະຊາຊົນບັນດາເຜົ່າ ໄດ້ຮັບຮູ້, ເຂົ້າໃຈມູນເຊື້ອປະຕິວັດຂອງຊາດລາວເຮົາ, ມູນເຊື້ອການຕໍ່ສູ້ອັນພິລະອາດຫານ, ຜົນງານອັນໃຫຍ່ຫຼວງຂອງກອງພັນທີ 2 ວິລະຊົນ ແລະ ວິລະກຳໂຕນຄຸກຢ່າງມະຫັດສະຈັນ ຂອງບັນດາຜູ້ນຳ ຂອງພັກ ແລະ ແນວລາວຮັກຊາດ, ເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ ຢ່າງກວ້າງຂວາງ ແລະ ທົ່ວເຖິງທຸກເປົ້າໝາຍ.

2. ເພື່ອສຶກສາອົບຮົມ ບັນດາຊັ້ນຄົນຕ່າງໆໃນທົ່ວສັງຄົມ ສືບຕໍ່ເສີມຂະຫຍາຍມູນເຊື້ອຮັກຊາດ, ຮັກລະບອບປະຊາທິປະໄຕປະຊາຊົນ, ສ້າງຄວາມສາມັກຄີປອງດອງ, ມີສະຕິລະວັງຕົວຕໍ່ກົນອຸບາຍທຳລາຍມ້າງເພຂອງອິດທິກຳລັງປໍລະປັກ ແລະ ເປັນເຈົ້າການເຂົ້າຮ່ວມໃນການປະຕິບັດແນວທາງປ່ຽນແປງໃໝ່ຢ່າງຮອບດ້ານ.

3. ຖືເອົາໂອກາດນີ້ ປຸກລະດົມຄວາມສາມັກຄີພາຍໃນ ພາຍນອກໃຫ້ແຂງແຮງ ໂດຍຖືເອົາມູນເຊື້ອປະຫວັດສາດ ອັນສຳຄັນດັ່ງກ່າວເປັນບົດຮຽນ ໃນການເຄື່ອນໄຫວ ນຳພາ - ແນວຄິດ ແລະ ການຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ ຢູ່ໃນແຕ່ລະຂົງເຂດວຽກງານໃຫ້ມີຜົນສຳເລັດ; ພ້ອມນັ້ນກໍເພື່ອສະແດງຄວາມກະຕັນຍູ ຮູ້ບຸນຄຸນຕໍ່ວິລະຊົນ ແລະ ຜູ້ມີຜົນງານອັນໃຫຍ່ຫຼວງຕໍ່ປະເທດຊາດ ແລະ ປະຊາຊົນ.



CamScanner

## II. ເນື້ອໃນໂຄສະນາ-ປາຖະກະຖາ ແລະ ຄຳຂວັນປຸກລະດົມ.

### 1. ເນື້ອໃນການໂຄສະນາ-ປາຖະກະຖາ.

- ໃຫ້ນຳໃຊ້ເອກະສານທີ່ຈັດພິມຢູ່ໃນປຶ້ມຄູ່ມື ໂຄສະນາ-ປາຖະກະຖາ ທີ່ຈັດພິມໂດຍຄະນະໂຄສະນາອົບຮົມສູນກາງພັກ ປີ 2018 ຫຼື ເອກະສານທີ່ສ້າງຂຶ້ນໃນປີຜ່ານມາ.

- ໃຫ້ອີງໃສ່ ແຜນການເຄື່ອນໄຫວຂອງແຕ່ລະກະຊວງ-ອົງການ ແລະ ທ້ອງຖິ່ນ ກ່ຽວກັບວຽກງານການເມືອງ - ແນວຄິດ ຢູ່ໃນຂົງເຂດຂອງຕົນ ເພື່ອຈັດຕັ້ງປາຖະກະຖາ ວັນປະຫວັດສາດສຳຄັນດັ່ງກ່າວ ໂດຍຕິດພັນກັບ ການໂຄສະນາປຸກລະດົມການຈັດຕັ້ງປະຕິບັດໜ້າທີ່ ອັນຮີບດ່ວນຂອງຂະແໜງການຕົນ.

### 2. ຄຳຂວັນປຸກລະດົມ.

- ຊົມເຊີຍ ວັນຜ່າວົງປິດລ້ອມຂອງ ກອງພັນທີ 2 ທີ່ທົ່ງໄຫຫີນ-ຊຽງຂວາງ ຄົບຮອບ 64 ປີ.
- ລະນຶກວັນໂຕນຄຸກຢ່າງມະຫັດສະຈັນ ຂອງບັນດາຜູ້ນຳພັກ ແລະ ແນວລາວຮັກຊາດ ຄົບຮອບ 63 ປີ.
- ຕັ້ງໜ້າຮ່ຳຮຽນເອົາມູນເຊື້ອອັນສະຫງ່າງາມ ພິລະອາດຫານ ຂອງກອງພັນທີ 2 ວິລະຊົນ.
- ຂອກເຮັງເສີມຂະຫຍາຍມູນເຊື້ອອັນສະຫງ່າງາມຂອງກອງພັນທີ 2 ວິລະຊົນຢ່າງບໍ່ຢຸດຢັ້ງ.

## III. ເປົ້າໝາຍ ແລະ ກຳນົດເວລາ.

- ກະຊວງ, ອົງການຈັດຕັ້ງພັກ-ລັດ, ອົງການຈັດຕັ້ງມະຫາຊົນອ້ອມຂ້າງສູນກາງ ດຳເນີນການປາຖະກະຖາກ່ອນ ຫຼື ຫຼັງວັນດັ່ງກ່າວ ຕາມເງື່ອນໄຂຂອງກະຊວງ-ອົງການຂອງຕົນເອງ, ສຳລັບເປົ້າໝາຍເຂົ້າຮ່ວມແມ່ນຄະນະພັກ, ພະນັກງານ ຫຼັກແຫຼ່ງແກ່ນສານຂອງຂະແໜງການຕົນ.

- ບັນດາແຂວງ, ນະຄອນຫຼວງວຽງຈັນ ອາດຈະດຳເນີນການປາຖະກະຖາກ່ອນ ຫຼື ຫຼັງວັນດັ່ງກ່າວກໍ່ໄດ້, ສຳລັບເປົ້າໝາຍ ແມ່ນພະນັກງານ, ສະມາຊິກພັກ, ນັກສຶກສາ, ນັກຮຽນຮູ້ປັນຍາຊົນ ຕະຫຼອດຮອດພໍ່ແມ່ປະຊາຊົນບັນດາເຜົ່າພາຍໃນແຂວງຂອງຕົນ.

## IV. ວິທີຈັດຕັ້ງປະຕິບັດ.

1. ພາຍຫຼັງໄດ້ຮັບແຈ້ງການແນະນຳ ໃຫ້ຄະນະພັກແຕ່ລະຂັ້ນຄົ້ນຄວ້າ, ວາງແຜນການເພື່ອຜັນຂະຫຍາຍເປັນອັນລະອຽດ ແລະ ຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ.

2. ການຈັດຕັ້ງປາຖະກະຖາ ອາດຈະໃຊ້ເວລາ ໜຶ່ງຕອນ ຫຼື ສອງຕອນ ຕາມເງື່ອນໄຂສະດວກຂອງກະຊວງ - ອົງການ, ຂະແໜງການ ແລະ ທ້ອງຖິ່ນຕົນ.

3. ພາຍຫຼັງດຳເນີນການປາຖະກະຖາສຳເລັດແລ້ວ ສະຫຼຸບລາຍງານໃຫ້ ຄະນະໂຄສະນາອົບຮົມສູນກາງພັກ ໃນເວລາອັນຄວນດ້ວຍ.

**ຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ**

ຄຳພັນ ເຜີຍຍະວົງ



CamScanner